ກະຊວງອຸດສາຫະກຳແລະການຄ້າ
ກົມການຄ້າພາຍໃນ
ຮັບ ເລກທີ: 1158
ວັນທີ: 26.06.09

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ຄະນະເລຂາທິການລັດຖະບານ

ເລກທີ 1093 ຄລບ

ນະຄອນຫຼວງວຽງຈັນ.ວັນທີ 24.6.09

ກະຊວງອຸດສາຫະກຳແລະການຄ້າ
ຮັບ ເລກທີ: 1531
ວັນທີ: 25/6/09

## ແຈ້ງການ

ຮຽນ - ທ່ານລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ. ✓

- ທ່ານລັດຖະມົນຕີວ່າການ ກະຊວງການເງິນ.

ເລື່ອງ : ການຄົ້ນຄ້ວາ ເຂົ້າຫາແຫຼ່ງທຶນ 50 ຕື້ກີບ ເພື່ອເກັບຊື້ເຂົ້າແຮຂອງລັດຖະບານ ບ້ວງແຊກແຊງລາຄາ ແລະ ດັດສົມຕະຫລາດ ຈຳນວນ 8.000 ໂຕນ ( ເຂົ້າສານໜຽວ ) ໃນສົກປີ 2008-2009.

- ອີງຕາມຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 96/ນຍ, ລົງວັນທີ 23 ກັນຍາ 2008 ວ່າດ້ວຍການສ້າງຕັ້ງຄັງແຮເຂົ້າແຫ່ງຊາດ.

- ອີງຕາມບົດລາຍງານ ສະບັບເລກທີ 1130/ອຄ.ຄພນ, ລົງວັນທີ 09 ມິຖຸນາ 2009 ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ.

ຄະນະເລຂາທິການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ :

" 1. ເຫັນດີອະນຸມັດໃຫ້ກະຊວງອຸດສາຫະກຳ ແລະການຄ້າ ເປັນຜູ້ຄຸ້ມຄອງເງິນທຶນດັ່ງກ່າວ ແຕ່ໃຫ້ສ້າງລະບຽບການຄຸ້ມຄອງລະອຽດ, ພ້ອມທັງດຳເນີນການຕິດຕາມກວດກາເປັນປະຈຳ ເພື່ອນຳໃຊ້ທຶນດັ່ງກ່າວຢ່າງມີປະສິດທິຜົນ ແລະ ບໍ່ໃຫ້ເສຍຫາຍ ຄືຜ່ານມາ.

2. ໃຫ້ກະຊວງການເງິນ ພິຈາລະນາ ກ່ຽວກັບການອອກໜັງສືຄ້ຳປະກັນ.

3. ສຳລັບຫົວໜ່ວຍທຸລະກິດທີ່ຈະກູ້ຢືມເງິນ ເພື່ອສ້າງຄັງແຮເຂົ້າ ຕ້ອງມີແຜນການດຳເນີນທຸລະກິດລະອຽດ ແລະ ຕ້ອງເຮັດຂໍ້ຜູກພັນສັນຍາກັບຜູ້ໃຫ້ທຶນ ຢ່າງຮັດກຸມ ເພື່ອເປັນບ່ອນອີງ ສຳລັບການຕິດຕາມກວດກາຄວາມຮັບຜິດຊອບຂອງແຕ່ລະຝ່າຍ ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,
ຫົວໜ້າຄະນະເລຂາທິການລັດຖະບານ.

ບ່ອນນຳສົ່ງ

| | |
|---|---|
| - ນາຍົກ,ຮອງນາຍົກລັດຖະມົນຕີ | 5 ສະບັບ |
| - ຫ້ອງວ່າການສູນກາງພັກ | 1 ສະບັບ |
| - ກະຊວງແຜນການ-ການລົງທຶນ | 1 ສະບັບ |
| - ກະຊວງກະສິກຳ ແລະປ່າໄມ້ | 1 ສະບັບ |
| - ທະນາຄານແຫ່ງ ສປປ ລາວ | 1ສະບັບ |
| - ເກັບມ້ຽນ | 8 ສະບັບ |

ສຳນັກງານນາຍົກລັດຖະມົນຕີ ສ.ປ.ປ ລາວ
ຄະນະເລຂາທິການລັດຖະບານ

ເຈືອງ ສົມບູນຂັນ